ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC



# ຮັບສະໝັກ
# ເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ ສູ່ຄວາມສຳເລັດກັບພວກເຮົາ...

❖ **ຕຳແໜ່ງ: ພະນັກງານຂັບລົດສັນຍາຈ້າງ 01 ຕຳແໜ່ງ ປະຈຳ ທຄຕລ ສາຂາຈຳປາສັກ**

- **ລາຍຮັບພື້ນຖານກ່ອນອາກອນ 4.000.000 ກີບ- 5.000.000 ກີບ ບໍ່ລວມໂອທີ ແລະ ສະຫວັດດີການອື່ນໆ**

### ➢ ໜ້າທີ່ຮັບຜິດຊອບຫຼັກ

– ປະຕິບັດໜ້າທີ່ຂັບລົດຮັບໃຊ້ວຽກງານພາຍໃນສຳນັກງານໃຫຍ່ ແລະ ບັນດາໜ່ວຍບໍລິການ
– ບຳລຸງຮັກສາລົດທີ່ຢູ່ໃນຄວາມຮັບຜິດຊອບ ແລະ ບັນດາອຸປະກອນເຄື່ອງໃຊ້ພາຍໃນລົດໃຫ້ມີຄວາມສະອາດຈົບງາມ
– ກວດສອບສະພາບ ແລະ ຮັກສາລົດໃຫ້ພ້ອມໃຊ້ງານເປັນປະຈຳ
– ວຽກງານອື່ນໆ ທີ່ການຈັດຕັ້ງໄດ້ມອບໝາຍ

### ➢ ເງື່ອນໄຂຜູ້ສະໝັກ

– ເພດ: **ຊາຍ** ອາຍຸ **20-35 ປີ** (ເກີດລະຫວ່າງ **ປີ 1989 ຫາ 2004**), ກໍລະນີອາຍຸເກີນແມ່ນໃຫ້ສິ່ງຂໍ້ມູນໄດ້ ທຄຕລ ຈະນຳສະເໜີຄະນະອຳນວຍການພິຈາລະນາ
– ຈົບມັດທະຍົມຕອນຕົ້ນຂຶ້ນໄປ
– ມີໃບອະນຸຍາດຂັບຂີ່ລົດປະເພດ B (Cat B) ຂຶ້ນໄປ ແລະ ຍັງນຳໃຊ້ໄດ້ຢູ່ຈົນເຖິງປະຈຸບັນ (ບໍ່ໝົດອາຍຸການນຳໃຊ້)
– ບໍ່ຕິດທາດເຫຼົ້າ ຫຼື ສິ່ງເສບຕິດໃດໆ
– ບໍ່ເຄີຍຕ້ອງໂທດຄະດີອາຍາ ແລະ ອາດສະຍາກຳອື່ນໆ, ຕິດຄຸກ ແລະ ກ່ຽວຂ້ອງກັບສິ່ງຜິດລະບຽບກົດໝາຍ
– ບໍ່ເຄີຍກະທຳຄວາມຜິດທຸກກໍລະນີທີ່ຜິດກົດໝາຍຂອງ ສປປ ລາວ ຫຼື ຢູ່ໃນຂັ້ນຕອນການດຳເນີນຄະດີໃດໜຶ່ງ
– ສາມາດເຮັດວຽກນອກໂມງການ, ວັນພັກລັດຖະການ ແລະ ສາມາດໄປວຽກຕ່າງແຂວງໄດ້

### ➢ ຄຸນລັກສະນະເພີ່ມຕື່ມຂອງຜູ້ສະໝັກ

– ມີສຸຂະພາບແຂງແຮງ ແລະ ສາມາດຍົກເຄື່ອງໜັກໄດ້
– ມີປະສົບການໃນການຂັບຂີ່ລົດໃຫຍ່ ແລະ ມີຄວາມຮູ້ກ່ຽວກັບເສັ້ນທາງຕ່າງໆ ເປັນຢ່າງດີ ສາມາດຂັບລົດເສັ້ນທາງໄລຍະໄກໄດ້
– ບໍ່ເຄີຍຖືກໄລ່ອອກ ຫຼື ປະລະໜ້າທີ່ມາກ່ອນ
– ມີຄວາມຫ້າວຫັນ, ກົງຕໍ່ເວລາ, ມີຄວາມເສຍສະຫຼະ ແລະ ຊື່ສັດຕໍ່ໜ້າທີ່ວຽກງານ
– ມີຄວາມຮູ້ການນຳໃຊ້ອຸປະກອນການບຳລຸງຮັກສາລົດ ແລະ ສ້ອມແປງລົດໄດ້
– ມີມະນຸດສຳພັນດີ ແລະ ມີໃຈຮັກໃນການບໍລິການ
– ລະອຽດຮອບຄອບ, ມີຄວາມຮັບຜິດຊອບສູງ ແລະ ກົງຕໍ່ເວລາ ເຄົາລົບນັບຖືກົດລະບຽບກົດໝາຍ ແລະ ລະບຽບຈາລະຈອນຢ່າງເຄັ່ງຄັດ

### ➢ ວິທີສະໝັກວຽກ

ຜູ້ທີ່ມີເງື່ອນໄຂຄົບຖ້ວນຕາມການປະກາດ ແລະ ມີຄວາມສົນໃຈແມ່ນໃຫ້ຕິດຕໍ່ພົວພັນດ້ວຍຕົນເອງໄດ້ ທີ່ **ທຄຕລ ສາຂາຈຳປາສັກ, ຂະແໜງຫ້ອງການ-ບັນຊີ-ໄອທີ, ຊັ້ນ 04 ຫຼື ໂທສອບຖາມຂໍ້ມູນກ່ອນໄດ້ທີ່ 031 213207 ກຳນົດເລີ່ມຮັບເອກະສານ ຕັ້ງແຕ່ວັນທີ 05-16/02/2024 (ໃນວັນ ແລະ ເວລາລັດຖະການ).**

**ໝາຍເຫດ**: ບໍ່ອະນຸຍາດໃຫ້ພໍ່ແມ່, ອ້າຍເອື້ອຍນ້ອງ ຫຼື ພີ່ນ້ອງຂອງຜູ້ສະໝັກງານມາພົວພັນສະໝັກວຽກແທນ.